ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 236/ລບ
ນະຄອນຫຼວງວຽງຈັນ, ວັນທີ 18.05.2020

# ດຳລັດ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ການລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ສປປ ລາວ ຮອດປີ 2030

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 06 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ເມສາ 2020, ເລກທີ 04/ລບ, ລົງວັນທີ 31 ມີນາ 2020;
- ອີງຕາມ ໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0631/ກຜທ.ຮມສ-ອພມ.01, ລົງວັນທີ 27 ເມສາ 2020.

## ລັດຖະບານ ອອກດຳລັດ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ຍຸດທະສາດການລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາ 2030.

**ມາດຕາ 2** ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ຄົ້ນຄວ້າພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນຢ່າງດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ